ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 2205 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 27 ສິງຫາ 2024

# ຄໍາແນະນໍາ

## ກ່ຽວກັບການຈັດຕັ້ງປະຕິບັດຫຼັກສູດ ແລະ ການຈັດການຮຽນ-ການສອນ ສໍາລັບການສຶກສາກ່ອນໄວຮຽນ ປະຈໍາສົກຮຽນ 2024-2025

- ອີງຕາມ ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021.

**ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ອອກຄໍາແນະນໍາ:**

1. ຈຸດປະສົງ

1) ເພື່ອຜັນຂະຫຍາຍເນື້ອໃນການຈັດຕັ້ງຕິບັດຫຼັກສູດສໍາລັບຊັ້ນການສຶກສາກ່ອນໄວຮຽນ;

2) ເພື່ອແນະນໍາ ອະທິບາຍຮູບແບບ ແລະ ວິທີການຈັດການຮຽນການສອນ ສໍາລັບຊັ້ນການສຶກກສາກ່ອນໄວຮຽນໃຫ້ມີຄວາມສອດຄ່ອງ ແລະ ເໝາະສົມແຕ່ລະທ້ອງຖິ່ນໃນແຕ່ລະໄລຍະ;

3) ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ການຈັດການຮຽນການສອນ ສໍາລັບຊັ້ນການສຶກສາກ່ອນໄວຮຽນ.

2. ການປະຕິບັດຫຼັກສູດການສຶກສາກ່ອນໄວຮຽນ

ສະຖານການສຶກສາກ່ອນໄວຮຽນ ທັງພາກລັດ ແລະ ເອກະຊົນ ໃຫ້ປະຕິບັດຕາມຫຼັກສູດ ແລະ ແຜນຈັດປະສົບການ ທີ່ກະຊວງສຶກສາທິການ ແລະ ກິລາ ກໍານົດໄວ້.

1) ຊັ້ນລ້ຽງເດັກ

ໂຮງລ້ຽງເດັກ ຫຼື ສູນພັດທະນາເດັກ ໃຫ້ນໍາໃຊ້ແຜນການລ້ຽງດູ ແລະ ສຶກສາອົບຮົມ ເດັກອາຍຸ 03-36 ເດືອນ ທີ່ ກະຊວງສຶກສາທິການ ແລະ ກິລາ ກໍານົດໄວ້;

2) ຊັ້ນອະນຸບານສຶກສາ:

- ໂຮງຮຽນອະນຸບານ ໃຫ້ນໍາໃຊ້ຫຼັກສູດຊັ້ນອະນຸບານສຶກສາ ແລະ ແຜນຈັດປະສົບການຊັ້ນອະນຸບານສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ກໍານົດໄວ້;
- ຫ້ອງກຽມປະຖົມ ໃຫ້ນໍາໃຊ້ແຜນການຈັດປະສົບການຕາມ 08 ໜ່ວຍການສອນ ຂອງຫ້ອງກຽມປະຖົມ (ສະບັບປັບປຸງ, 2022) ທີ່ ກະຊວງສຶກສາທິການ ແລະ ກິລາ ກໍານົດໄວ້;
- ໂຮງຮຽນອະນຸບານນານາຊາດ ໃຫ້ນໍາໃຊ້ຫຼັກສູດ ທີ່ກະຊວງສຶກສາທິການ ແລະ ກິລາ ອະນຸມັດ;
- ສູນພັດທະນາເດັກກ່ອນໄວຮຽນຕ່າງໆ ແມ່ນໃຫ້ປະຕິບັດຕາມຫຼັກສູດ, ແຜນຈັດປະສົບການ ແລະ ຄູ່ມືຈັດຕັ້ງປະຕິບັດທີ່ພາກສ່ວນດັ່ງກ່າວໄດ້ຮັບການອະນຸມັດ ຈາກກະຊວງສຶກສາທິການ ແລະ ກິລາ.



ສະແກນດ້ວຍ CamScanner

3. ການຈັດການຮຽນການສອນ

ການຈັດການຮຽນການສອນ ສຳລັບຊັ້ນການສຶກສາກ່ອນໄວຮຽນ ໃຫ້ປະຕິບັດດັ່ງລຸ່ມນີ້:

1) ຊັ້ນລ້ຽງເດັກ:

- ຈັດການຮຽນການສອນ ແລະ ຝຶກແອບໃຫ້ສອດຄ່ອງກັບພັດທະນາການຂອງເດັກ ອາຍຸ 03-36 ເດືອນ ໂດຍຜ່ານການຝຶກແອບດ້ານຮ່າງກາຍ, ຫຼິ້ນແບບຫຼິ້ນ, ຝຶກແອບເວົ້າ, ຄຳຄ່ອງ, ເລົ່າເລື່ອງ, ຮ້ອງເພງ, ຟ້ອນ ແລະ ອື່ນໆ ແລະ ໃຊ້ເວລາ 36 ອາທິດຕໍ່ສົກຮຽນ, 5 ວັນ ຕໍ່ໜຶ່ງອາທິດ, ຮັບເດັກໝົດມື້ ຫຼື 1 ຕອນ;

- ເວລາຈັດການຮຽນການສອນ ແລະ ຝຶກແອບ ເດັກອາຍຸ 03-12 ເດືອນ ໃຊ້ເວລາ 3-5 ນາທີ, ເດັກອາຍຸ 12-24 ເດືອນ ໃຊ້ເວລາ 5-7 ນາທີ, ເດັກອາຍຸ 24-36 ເດືອນ ໃຊ້ເວລາ 7-10 ນາທີ.

2) ຊັ້ນອະນຸບານສຶກສາ

- ການຈັດກິດຈະກຳຈັດການຮຽນການສອນ ສຳລັບຊັ້ນອະນຸບານສຶກສາ ປະກອບ ມີ 6 ກິດຈະກຳ ຄື: ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ, ວົງມົນ, ສິລະປະສ້າງສັນ, ການຫຼິ້ນກາງແຈ້ງ, ການຫຼິ້ນຕາມມຸມ ແລະ ເກມການສຶກສາ ແລະ ໃຊ້ເວລາ 36 ອາທິດ/ສົກຮຽນ, 5 ວັນ ຕໍ່ໜຶ່ງອາທິດ, ຮັບເດັກໝົດມື້ ຫຼື 1 ຕອນ;

- ເວລານຳໃຊ້ການຈັດກິດຈະກຳ: ຂັ້ນອະນຸບານ 1 ໃຊ້ເວລາ 15-20 ນາທີ, ຂັ້ນອະນຸບານ 2 ໃຊ້ເວລາ 20-25 ນາທີ ແລະ ຂັ້ນອະນຸບານ 3 ໃຊ້ເວລາ 25-30 ນາທີ;

3) ໃຫ້ຄູສອນແຕ່ລະຂັ້ນຂອງແຕ່ລະຊັ້ນຮຽນ ສ້າງແຜນການສອນ (ປະຈຳເດືອນ, ພາກຮຽນ ແລະ ປະຈຳປີ), ແຕ່ງບົດສອນ (ສາມາດຂຽນ ຫຼື ພິມດ້ວຍຄອມພິວເຕີ), ກະກຽມສື່ການຮຽນການສອນ ແຕ່ລະກິດຈະກຳ ໃຫ້ຄົບຖ້ວນ ໂດຍຜ່ານການຮັບຮອງຈາກຄະນະອຳນວຍການໂຮງຮຽນຈຶ່ງສາມາດ ນຳໄປສອນໄດ້;

4) ໃຫ້ຄູສອນປະຕິບັດຕາມບາດກ້າວການສອນ ແລະ ວິທີການສອນ ໂດຍສົ່ງເສີມໃຫ້ເດັກເປັນໃຈກາງ ແລະ ນຳໃຊ້ວິທີການຈັດການຮຽນການສອນທີ່ຫຼາກຫຼາຍໂດຍຜ່ານກິດຈະກຳປະຈຳວັນຂອງແຕ່ລະຊັ້ນ ແລະ ຂັ້ນຮຽນ;

5) ໃຫ້ບັນດາໂຮງຮຽນທີ່ຖືກຜົນກະທົບຈາກໄພທຳມະຊາດ ຈັດຕັ້ງປະຕິບັດການຈັດການຮຽນການສອນ ທົດແທນ ຕາມຫຼັກສູດທີ່ໄດ້ກຳນົດໄວ້ ເພື່ອໃຫ້ນັກຮຽນໄດ້ ກຽມຄວາມພ້ອມ ກ່ອນເຂົ້າຮຽນ ໃນສະຖານການສຶກສາກ່ອນໄວຮຽນ.

4. ປະຕິທິນການສຶກສາສຳລັບສະຖານການສຶກສາກ່ອນໄວຮຽນ

1) ພາກຮຽນທີ I

- ວັນທີ 02 ກັນຍາ 2024 ເປັນມື້ໄຂສົກຮຽນ ແລະ ໃຫ້ດຳເນີນການຮຽນການສອນ ຈົນຮອດທ້າຍ ວັນທີ 10 ມັງກອນ 2025;

- ວັນທີ 13-17 ມັງກອນ 2025 ຈັດຕັ້ງປະເມີນພັດທະນາການເດັກ,

- ວັນທີ 20-24 ມັງກອນ 2025 ນັກຮຽນພັກພາກຮຽນທີ I, ຄູສັງລວມຜົນການພັດທະນາການຂອງເດັກ ແລະ ປະຕິບັດກິດຈະກຳອື່ນໆ.

2) ພາກຮຽນທີ II

- ວັນທີ 27 ມັງກອນ 2025 ດຳເນີນການຮຽນການສອນ ພາກຮຽນທີ II

- ວັນທີ 27 ພຶດສະພາ 2025 ປະເມີນພັດທະນາການເດັກ ແລະ ປິດສົກຮຽນ.

5. ການຕິດຕາມພັດທະນາການເດັກ

ຕິດຕາມພັດທະນາການຂອງເດັກໃນສະຖານການສຶກສາກ່ອນໄວຮຽນ ປະຕິບັດດັ່ງນີ້:

1) ຕິດຕາມພັດທະນາການເດັກເປັນລາຍບຸກຄົນຢ່າງສະໝໍ່າສະເໝີຕໍ່ເນື່ອງຕະຫຼອດສົກຮຽນໃຫ້ຄົບທຸກດ້ານ ຕາມປຶ້ມຕິດຕາມພັດທະນາການຂອງເດັກແຕ່ລະຂັ້ນຮຽນ;

2) ຕິດຕາມພັດທະນາການເດັກ ໂດຍຜ່ານກິດຈະກຳການຮຽນການສອນ ທີ່ກຳນົດໄວ້ໃນຕາຕະລາງປະຈຳວັນ ຄື: ການສຳພາດ, ການສົນທະນາ ແລະ ການສັງເກດການປະຕິບັດກິດຈະກຳ ແລະ ພຶດຕິກຳທີ່ສະແດງອອກ



ສະແກນດ້ວຍ CamScanner

ໂດຍມີການບັນທຶກຂໍ້ມູນໄວ້ໃນປຶ້ມຕິດຕາມພັດທະນາການເດັກ ຫຼື ແຟ້ມສະສົມຜົນງານຢ່າງເປັນລະບົບ ເພື່ອໃຊ້ເປັນຫຼັກຖານໃນການປັບປຸງພັດທະນາການແຕ່ລະດ້ານຂອງເດັກ;

3) ສະຫຼຸບຜົນການຕິດຕາມພັດທະນາການເດັກແຕ່ລະດ້ານເປັນພາກຮຽນ ແລະ ບັນທຶກການສະຫຼຸບໄວ້ໃນປຶ້ມຮຽກຊື່ ແລະ ຕິດຕາມພັດທະນາການ, ແຟ້ມສະສົມຜົນງານ ແລະ ປຶ້ມຕິດຕາມພັດທະນາການຂອງເດັກແຕ່ລະຄົນ.

## 6. ການສະຫຼຸບ ແລະ ລາຍງານ

1) ໃຫ້ສະຖານການສຶກສາກ່ອນໄວຮຽນ ສະຫຼຸບ ແລະ ລາຍງານ ປະຈໍາພາກຮຽນ ແລະ ສົກຮຽນ ເປັນປົກກະຕິ ໃຫ້ແກ່ຫ້ອງການສຶກສາທິການ ແລະ ກິລາ ເມືອງ;
2) ໃຫ້ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ ຊີ້ນໍາ, ຊຸກຍູ້, ຕິດຕາມ, ສະຫຼຸບ ແລະ ລາຍງານສະພາບການຈັດຕັ້ງປະຕິບັດການຮຽນການສອນ ພາຍໃນເມືອງຂອງຕົນ ໃຫ້ແກ່ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ;
3) ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ຊີ້ນໍາ, ຊຸກຍູ້, ຕິດຕາມ, ສະຫຼຸບ ແລະ ລາຍງານສະພາບການຈັດຕັ້ງປະຕິບັດການສຶກສາກ່ອນໄວຮຽນພາຍໃນແຂວງຂອງຕົນ ແລະ ສົ່ງບົດລາຍງານໃຫ້ແກ່ກົມການສຶກສາກ່ອນໄວຮຽນ ໃນອາທິດທີ 3 ຂອງເດືອນມິຖຸນາ 2025.

## 7. ມາດຕະການຈັດຕັ້ງປະຕິບັດ

ການຈັດຕັ້ງຜັນຂະຫຍາຍຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດຫຼັກສູດ ແລະ ການຈັດການຮຽນການສອນສໍາລັບການສຶກສາກ່ອນໄວຮຽນ ປະຈໍາສົກຮຽນ 2024-2025 ໃຫ້ປະຕິບັດດັ່ງນີ້:

1) ໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງພ້ອມກັນຜັນຂະຫຍາຍ ແລະ ປະຕິບັດຄໍາແນະນໍາສະບັບນີ້ໃຫ້ໄດ້ຮັບຜົນດີ ພ້ອມທັງລາຍງານຜົນໃນການຈັດຕັ້ງປະຕິບັດໃຫ້ຂັ້ນເທິງຂອງຕົນຮັບຊາບເປັນປົກກະຕິ ແລະ ທັນການ;
2) ໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ ຄຸ້ມຄອງ, ຕິດຕາມ, ກວດກາ, ຊ່ວຍເຫຼືອ ແລະ ສະຫຼຸບລາຍງານກ່ຽວກັບການຈັດການຮຽນການສອນ ຂອງສະຖານການສຶກສາກ່ອນໄວຮຽນ ພາຍໃນຄວາມຮັບຜິດຊອບຂອງຕົນ ໃຫ້ ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ;
3) ໃຫ້ຜູ້ບໍລິຫານສະຖານການສຶກສາກ່ອນໄວຮຽນ, ຄູສອນ, ຜູ້ດູແລເດັກ ຄຸ້ມຄອງ ແລະ ດໍາເນີນການຈັດການຮຽນການສອນ, ເບິ່ງແຍງລ້ຽງດູ ແລະ ເອົາໃຈໃສ່ວຽກງານອະນາໄມສາມສະອາດ ແລະ ສົ່ງເສີມສຸຂະພາບພາບໃນໂຮງລ້ຽງເດັກ, ໂຮງຮຽນອະນຸບານ ແລະ ສູນພັດທະນາເດັກກ່ອນໄວຮຽນອື່ນໆ. ພ້ອມທັງສະຫຼຸບ ແລະ ລາຍງານໃຫ້ແກ່ຫ້ອງການສຶກສາທິການ ແລະ ກິລາເມືອງ;
4) ໃຫ້ພໍ່ແມ່/ຜູ້ປົກຄອງເດັກ, ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ອໍານາດການປົກຄອງ ເອົາໃຈໃສ່ລ້ຽງດູ, ເບິ່ງແຍງລູກຫຼານ, ໃຫ້ການຮ່ວມມື ແລະ ປະກອບສ່ວນຈັດຕັ້ງປະຕິບັດລະບຽບຂອງສະຖານການສຶກສາກ່ອນໄວຮຽນ ແລະ ມາດຕະການຕ່າງໆທີ່ຂັ້ນເທິງວາງອອກ.

ດັ່ງນັ້ນ, ຈຶ່ງອອກຄໍາແນະນໍາສະບັບນີ້ ແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດຢ່າງທົ່ວເຖິງ.

ເຊັນແທນລັດຖະມົນຕີ

ກະຊວງສຶກສາທິການ ແລະ ກິລາ ລັດຖະມົນຕີ

ປອ. ລໍາລານ ພັນຄະວົງ

**ບ່ອນສົ່ງ**

- ຫ້ອງການກະຊວງສຶກສາທິການ ແລະ ກິລາ 1 ສະບັບ
- ພະແນກສຶກສາທິການ ແລະ ກິລາແຂວງ ແລະ ນະຄອນຫຼວງ, ແຂວງລະ 1 ສະບັບ
- ເກັບມ້ຽນ 5 ສະບັບ



ສະແກນດ້ວຍ CamScanner